# ຕັ້ງໜ້າພັດທະນາການສຶກສາເພື່ອຕອບສະໜອງນະໂຍບາຍພັດທະນາ ຊັບພະຍາກອນມະນຸດ ແລະ ເສດຖະກິດ - ສັງຄົມ ຂອງປະເທດ.

ໂດຍ: ທ່ານ ດວງຕາ ບູນລາວົງ *

**I. ຄຳນຳ**

ດັ່ງທີ່ພວກເຮົາໄດ້ຮັບຮູ້ນຳກັນແລ້ວວ່າ: ມະຕິກອງປະຊຸມໃຫ່ຍຄັ້ງທີ VII ຂອງພັກປະຊາຊົນປະຕິວັດລາວ ໄດ້ກາຍເປັນບ່ອນອີງໃຫ້ແກ່ການກຳນົດແນວທາງພັດທະນາ ເສດຖະກິດ-ສັງຄົມ ຂອງປະເທດ. ແຜນພັດທະນາ ເສດຖະກິດດັ່ງກ່າວ ໄດ້ມີການກຳນົດເປັນໄລຍະຄື: ໄລຍະ 20 ປີ ແຕ່ 2001-2020 ແລະ ໄລຍະ 5 ປີ ແຕ່ 2005-2010. ການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ-ສັງຄົມ ເຖິງຈະແມ່ນໄລຍະສັ້ນ ຫຼື ໄລຍະຍາວກໍ່ຕາມ ການ ສຶກສາລ້ວນແຕ່ມີບົດບາດ ສຳຄັນ ແລະ ມີລັກສະນະຕັດສິນຜົນສຳເລັດດັ່ງກ່າວ. ພາຍຫຼັງການປະຕິບັດ ໂຄງການ ພັດທະນາການສຶກສາ ແລະ ໂຄງການປັບປຸງຄຸນນະພາບການສຶກສາ ສຳເລັດລົງໃນສົກຮຽນ 1999-2000. ກະຊວງສຶກສາທິການ ກໍ່ສືບຕໍ່ດຳເນີນແຜນຍຸດທະສາດການສຶກສາ ໄດ້ຫຼາຍຮູບເຊັ່ນ: ໄດ້ຫັນຈາກການດຳເນີນໂຄງການ 5 ແຜນງານ :

1. ສາມັນ
2. ອາຊີວະສຶກສາ
3. ສ້າງຄູ
4. ນອກລະບົບໂຮງຮຽນ
5. ຄຸ້ມຄອງ ແລະບໍລິຫານການສຶກສາມາສຸມໃສ່ການປະຕິບັດໂຄງການເປັນ 3 ແຜນງານໃຫ່ຍຄື:
   (1). ແຜນງານຂະຫຍາຍໂອກາດເຂົ້າຮຽນ
   (2). ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ
   (3). ແຜນງານບໍລິຫານ

ບົດຊຽນບົດນີ້ແມ່ນ ການນຳສະເໜີຜົນສຳເລັດຈາກ ການເຄື່ອນໄຫວຜ່ານມາ ທີ່ມີລັກສະນະສັງລວມຂອງ ການປະຕິບັດແຜນພັດທະນາການສຶກສາປະຈຳປີ 2001-2002 ພ້ອມດ້ວຍບັນດາທິດທາງລວມ ແລະ ກິດຈະກຳ ເພື່ອຈະເປັນການສົ່ງເສີມໃຫ້ແກ່ການປະຕິບັດ 3 ແຜນງານໃຫ່ຍນັ້ນມາສະເໜີດັ່ງລາຍລະອຽດ ລຸ່ມນີ້:

## II. ຜົນສຳເລັດແຕ່ລະດ້ານຈາກການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ປະຈຳສົກປີຮຽນ 2001-2002.

### 1. ວຽກງານສາມັນສຶກສາ

- ໄດ້ຂະຫຍາຍໂຮງຮຽນອານຸບານ, ປະຖົມ ແລະ ມັດທະຍົມ ເພື່ອສ້າງເງື່ອນໄຂໃຫ້ແກ່ເດັກໃນເກນອາຍຸຮຽນ ໄດ້ເຂົ້າຮຽນນັບມື້ນັບຫຼາຍຂຶ້ນ. ໃນນັ້ນໂຮງຮຽນລ້ຽງເດັກ ແລະ ອານຸບານຂອງພາກລັດ ແລະ ເອກກະຊົນ ມີທັງ ໝົດ 785 ແຫ່ງ ທຽບກັບສົກຮຽນ 2000-2001 ເພີ່ມຂຶ້ນ 33 ແຫ່ງ, ມີນັກຮຽນລ້ຽງເດັກ ແລະ ອານຸບານ ທັງໝົດ 18.558 ຄົນ.

---

* ຫົວໜ້າຫ້ອງການ ກະຊວງສຶກສາທິການ.

- ໂຮງຮຽນປະຖົມທັງໝົດນັບທັງພາກລັດ-ເອກະຊົນມີ 8.433 ແຫ່ງ ທຽບກັບສົກຮຽນຜ່ານມາເພີ່ມຂຶ້ນ 241 ແຫ່ງ. ຈຳນວນນັກຮຽນປະຖົມທັງໝົດ 852.993 ຄົນ ເພີ່ມຂຶ້ນຈາກປີຮຽນຜ່ານມາ 2.8% ເດັກໃນເກນອາຍຸ 6-10 ປີ ໄດ້ເຂົ້າຮຽນ 80.4%
- ໂຮງຮຽນມັດທະຍົມພາກລັດ ແລະ ເອກະຊົນມີທັງໝົດ 858 ແຫ່ງ, ເພີ່ມຂຶ້ນ 38 ແຫ່ງ, ມີນັກຮຽນທັງໝົດ 315.572 ຄົນ; ໃນນັ້ນນັກຮຽນມັດທະຍົມຕອນຕົ້ນ: 213.490 ຄົນ ເພີ່ມຂຶ້ນ 9% ນັກຮຽນມັດທະຍົມຕອນປາຍມີ 102.082 ຄົນ ເພີ່ມຂຶ້ນ 16%.
- ໄດ້ຂະຫຍາຍໂຮງຮຽນ ໄປສູ່ເຂດຊົນເຜົ່າຫ່າງໄກສອກຫຼີກ ແລະ ໄດ້ຈັດຕັ້ງໂຮງຮຽນຊົນເຜົ່າຂຶ້ນ ໃນແຕ່ລະແຂວງ ເຖິງປະຈຸບັນມີນັກຮຽນ 5.962 ຄົນ ໃນນັ້ນ ນັກຮຽນປະຖົມມີ 2.365 ຄົນ. ໄດ້ຈັດຕັ້ງສອບເສັງນັກຮຽນເກັ່ງວິຊາ ຄະນິດສາດ, ວັນນະຄະດີ, ຟີຊິກ ແລະ ເຄມີສາດ ມີຜູ້ເຂົ້າຮ່ວມ 130 ຄົນ.

**2. ວຽກງານສ້າງຄູ:**

- ຈຳນວນ ໂຮງຮຽນສ້າງຄູ ທັງໝົດ 11 ແຫ່ງ ນັບທັງ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ, ຈຳນວນນັກຮຽນທັງໝົດ: 6.997ຄົນ. ສຳລັບສົກປີຮຽນ 2001-02 ນີ້ມີຜູ້ຮຽນຈົບອອກຮັບໃຊ້ສັງຄົມ: 2.715 ຄົນ.
- ໄດ້ເອົາໃຈໃສ່ປັບປຸງຫຼັກສູດການຮຽນ-ການສອນ ແລະ ຈັດກິດຈະກຳຫຼາຍດ້ານ ເພື່ອສົ່ງເສີມຄວາມຮູ້ຄວາມສາມາດ ແລະ ຄຸນນະພາບຂອງນັກຮຽນຄູ. ນອກຈາກນັ້ນ ຍັງໄດ້ຈັດການທັດສະນະສຶກສາ ໃຫ້ແກ່ອາຈານສອນຂອງສະຖາບັນສ້າງຄູ ເພື່ອແລກປ່ຽນບົດຮຽນເຊິ່ງກັນ ແລະກັນ ຈັດຕັ້ງຝຶກອົບຮົມ ລະດັບຄູໄລຍະສັ້ນ ຢູ່ພາຍໃນປະເທດ.
- ສົ່ງເສີມການເຄື່ອນໄຫວຂອງສູນບຳລຸງຄູ ເພື່ອຍົກລະດັບໃຫ້ແກ່ຄູ ທີ່ບໍ່ໄດ້ຜ່ານໂຮງຮຽນສ້າງຄູ, ປະຈຸບັນມີຜູ້ເຂົ້າຮັບການຝຶກອົບຮົມຈຳນວນ 1.016 ຄົນ, ຈັດຊຸດອົບຮົມຄູຈຳນວນ 3 ເດືອນ ເພື່ອແກ້ໄຂຂອດຂາດແຄນຄູໃຫ້ແກ່ເຂດຫ່າງໄກສອກຫຼີກ.

**3. ວຽກງານສຶກສານອກລະບົບໂຮງຮຽນ.**

- ລົບລ້າງຄວາມກືກໜັງສື ໃຫ້ແກ່ປະຊາຊົນໃນກຸ່ມເປົ້າໝາຍອາຍຸ 15-40 ປີ ໄດ້ 48.811 ຄົນ, ປະຕິບັດໄດ້ 65% ຂອງແຜນການ, ສາມາດຫລຸບໄດ້ວ່າ: ພົນລະເມືອງລາວທີ່ມີອາຍຸ 15-40 ປີ ໄດ້ລົບລ້າງຄວາມບໍ່ຮູ້ ໜັງສືໄດ້ແລ້ວ 83.3%.
- ຂະບວນການສືບຕໍ່ບຳລຸງຍົກລະດັບວັດທະນາທຳໃຫ້ແກ່ປະຊາຊົນ ພາຍຫຼັງການລົບລ້າງ ຄວາມບໍ່ຮູ້ໜັງສືແລ້ວມີ: ຈົບປະຖົມ 19.060 ຄົນ, ຊັ້ນມັດທະຍົມຕົ້ນມີ 1.257 ຄົນ.
- ໄດ້ຈັດຕັ້ງການອົບຮົມວິຊາຊີບຂັ້ນພື້ນຖານໃຫ້ແກ່ປະຊາຊົນເຊັ່ນ: ຊ່າງໄມ້, ຊ່າງກໍ່ສ້າງ, ຕັດຫຍິບ, ປຸງແຕ່ງອາຫານ, ການບໍລິການ, ປູກຝັງ, ລ້ຽງສັດ ຊຶ່ງມີຜູ້ເຂົ້າຮ່ວມ 4.646 ຄົນ.
- ປະຈຸບັນມີສູນວິຊາຊີບ ແລະ ການສຶກສາຊຸມຊົນ 269 ທ່ານ. ນອກນັ້ນ ຍັງໄດ້ປັບປຸງສົ່ງເສີມໃຫ້ມີສູນການສຶກສາທາງໄກຢູ່ບາງແຂວງ; ສູນດັ່ງກ່າວມີບົດບາດພັດທະນາຫລັກສູດ, ສື່ການສອນ ແລະ ຈັດຝຶກອົບຮົມຢູ່ຂັ້ນທ້ອງຖິ່ນ.
- ໄດ້ຈັດຕັ້ງສູນຝຶກອົບຮົມຜູ້ຮັບຜິດຊອບວຽກງານ ຕ້ານຢາເສບຕິດແຕ່ລະແຂວງ, ດຳເນີນການໂຄສະນາ ແລະສ້າງຂະບວນການຕ້ານຢາເສບຕິດໃນຫລາຍຮູບແບບ.

**4. ວຽກງານອາຊີວະສຶກສາ ແລະ ການສຶກສາຊັ້ນສູງ.**

- ຈຳນວນໂຮງຮຽນເຕັກນິກ-ວິຊາຊີບ ທັງພາກລັດ ແລະ ເອກະຊົນ 28 ແຫ່ງ, ມີນັກຮຽນ 15.384 ຄົນ ໃນນັ້ນຮຽນໃນພາກເອກະຊົນ 808 ຄົນ.
- ດຳເນີນການສຳຫລວດ ເພື່ອສ້າງຕັ້ງໂຮງຮຽນ ວິຊາຊີບຂຶ້ນຕື່ມອີກບາງ ແຂວງຄື: ອຸດົມໄຊ, ຊຽງຂວາງ ແລະ ບໍ່ແກ້ວ.
- ສ້າງເງື່ອນໄຂເປີດສາຍພິເສດ ເພື່ອຮອງຮັບນັກຮຽນໃຫ້ແກ່ຄວາມຕ້ອງການຂອງ ຜູ້ຮຽນຫລາຍຂຶ້ນກ່ວາສົກຮຽນຜ່ານມາ. ໄດ້ສ້າງຕັ້ງສະພາທີ່ປຶກສາອາຊີວະສຶກສາໃນລະດັບຊາດຂຶ້ນ ໂດຍມີຜູ້ເຂົ້າຮ່ວມຈາກຕົວແທນຫລາຍພາກສ່ວນເສດຖະກິດສັງຄົມ ເພື່ອເຮັດໜ້າທີ່ປະກອບຄຳເຫັນ ແລະ ລະດົມສະຕິປັນຍາ ຈາກທຸກພາກສ່ວນຂອງສັງຄົມເຂົ້າໃນການພັດທະນາອາຊີບ ແລະ ເຕັກນິກໃຫ້ແກ່ຄົນຮຸ່ນໜຸ່ມ.
- ສືບຕໍ່ພັດທະນາຄະນະຕ່າງໆໃນ ມະຫາວິທະຍາໄລແຫ່ງຊາດ ໃນຫລາຍຮູບ ເພື່ອເຮັດໃຫ້ຄຸນນະພາບດີຂຶ້ນເທື່ອລະກ້າວ. ພ້ອມກັນນັ້ນກໍ່ໄດ້ກຽມສ້າງຕັ້ງ ມະຫາວິທະຍາໄລເຂດຢູ່ແຂວງ ຫລວງພະບາງ ແລະຈຳປາສັກ.
- ສົ່ງເສີມການສຶກສາລະດັບຊັ້ນສູງໃນພາກເອກະຊົນ ເຊັ່ນປະຈຸບັນນີ້ມີ ວິທະຍາໄລພາກເອກະຊົນ 8 ແຫ່ງ, ນັກສຶກສາ 5.391 ຄົນ.
- ໄປຄຽງຄູ່ກັບການຈັດສົ່ງນັກຮຽນໄປສຶກສາຕໍ່ຢູ່ຕ່າງປະເທດ ຕາມທຶນຮ່ວມມືລະຫ່ວາງລັດຖະບານແລ້ວ, ກໍ່ຍັງມີນັກສຶກສານັບມື້ນັບຫລາຍ ໄປຮຽນຕໍ່ຢູ່ຕ່າງປະເທດດ້ວຍທຶນສ່ວນຕົວ ກໍ່ນັບມື້ນັບຫລາຍຂຶ້ນ. ໃນສົກຮຽນ 2001-02 ມີນັກຮຽນຈົບ ມ6 25.929 ຄົນ ໄດ້ສັບຊ້ອນເຂົ້າຮຽນຕໍ່ຢູ່ພາຍໃນ ແລະ ຕ່າງປະເທດນັບທັງພາກລັດ ແລະ ເອກະຊົນປະມານ 56.7%. ເພື່ອເປັນການສ້າງເງື່ອນໄຂໃຫ້ແກ່ ຜູ້ທີ່ຈົບຫລັກສູດ ຊັ້ນກາງ ຫລືຊັ້ນສູງໃນສາຂາອາຊີບຕ່າງໆ ໄດ້ມີໂອກາດຮຽນຕໍ່ໃນລະດັບປະລິນຍາຕີ ມະຫາວິທະຍາໄລ.

**5. ວຽກງານພາລະສຶກສາ ແລະ ຕ້ານຢາເສບຕິດ.**

- ໄດ້ຈັດຕັ້ງການເຄື່ອນໄຫວກິລາ ແລະ ສິນລະປະດົນຕີ ເພື່ອສ້າງບັນຍາກາດເບີກບານມ່ວນຊື່ນ ໃຫ້ແກ່ນັກຮຽນເພື່ອເອົາຕົນຫ່າງໄກຈາກ ຢາເສບຕິດເຊັ່ນ: ງານແຂ່ງຂັນກິລານັກຮຽນມັດທະຍົມທົ່ວປະເທດ ທີ່ແຂວງຄຳມ່ວນ ງານແຂ່ງຂັນເພັງ ແລະ ຈັດຄອນເສີດຕ້ານຢາເສບຕິດ ຢູ່ຕາມພາກພື້ນຖານ.
- ຈັດຕັ້ງໃຫ້ມີຄະນະຕ້ານ ແລະ ປາບປາມຢາເສບຕິດຂັ້ນ ກະຊວງ, ແຂວງ, ເມືອງ ແລະ ໂຮງຮຽນ, ພ້ອມນັ້ນກໍ່ໄດ້ມີການຝຶກອົບຮົມຜູ້ຮັບຜິຊອບວຽກດັ່ງກ່າວ ໄປສູ່ພາລະບົດບາດໜ້າທີ່.

**6. ວຽກງານພົວພັນ ແລະ ຮ່ວມມືກັບສາກົນ.**

- ສຳເລັດກອງປະຊຸມດ້ານສຶກສາ ເພື່ອຖອດຖອນບົດຮຽນໃນ 10 ປີ ຈາກການຮ່ວມມືລະຫ່ວາງ ລາວ-ຫວຽດນາມສຳລັບບັນດາແຂວງທີ່ມີສາຍແດນຕິດກັນ.
- ກະກຽມໂຄງການພັດທະນາຊັບພະຍາກອນມະນຸດ ດ້ານເຕັກໂນໂລຊີ, ການສື່ສານລະຫ່ວາງ 4 ປະເທດ: ລາວ, ກຳປູເຈຍ, ມຽນມ້າ ແລະ ຫວຽດນາມ.
- ໄດ້ເຊັນສັນຍາຮັບເອົາທຶນການຊ່ວຍເຫຼືອຈາກລັດຖະບານ ຍີ່ປຸ່ນ ສຳລັບປີ 2002 ເຖິງ 2009. ກ່ຽວກັບການຮັບເອົາໂຄງການຊ່ວຍເຫລືອລ້າ ເພື່ອປຸກສ້າງໂຮງຮຽນປະຖົມ 700 ຫລັງ, ປະຈຸບັນນີ້ ຫາກໍ່ສຳເລັດ 3 ຫລັງ ທີ່ຕັ້ງຂຶ້ນເພື່ອທົດລອງ. ສຳເລັດການສ້າງ ໂຄງການພັດທະນາຄຸນນະພາບການສຶກສາ ແລະ ສືບຕໍ່ໂຄງການພັດທະນາການສຶກສາໄລຍະ II ເພື່ອຮ່ວມມືກັບທະນາຄານໂລກ ພ້ອມທັງກຽມສ້າງໂຄງການຮ່ວມມືກັບຍີ່ປຸ່ນ, ຝຣັ່ງ, ແບນຊິກ ແລະ ອົງການຕະຫລາດຮ່ວມເອີລົບ.

<u>**ສັງເກດຕີລາຄາລວມການປະຕິບັດແຜນພັດທະນາການສຶກສາ 2001-2002**</u>

❖ ດ້ານດີ:

ໃນສົກປີຮຽນຜ່ານມາເຖິງແມ່ນສະພາບການຢູ່ພາຍໃນປະເທດ ແລະ ສາກົນໄດ້ມີອັນປ່ຽນແປງ, ເຊິ່ງການປ່ຽນແປງດັ່ງກ່າວມັນກໍ່ມີທັງ ດ້ານຕັ້ງໜ້າ ແລະ ດ້ານຫຍໍ້ທໍ້ ເຖິງວຽກງານສຶກສາ. ແຕ່ເຖິງຢ່າງນັ້ນກໍ່ຕາມຄູ, ອາຈານສອນ ແລະ ພະນັກງານກໍ່ໄດ້ມີຄວາມບຸກບືນ ແລະ ສືບຕໍ່ສ້າງຂະບວນການອັນຕັ້ງໜ້າມາສູ່ວຽກງານ ການສຶກສາ.

❖ ດ້ານອ່ອນ ແລະ ຄົງຄ້າງ:

ການຂະຫຍາຍການສຶກສາ ໄປສູ່ເຂດຫ່າງໄກສອກຫຼີກ, ຄວາມແຕກໂຕນດ້ານ ຄຸນນະພາບລະຫວ່າງ ເຂດທົ່ງພຽງກັບເຂດຫ່າງໄກສອກຫຼີກຍັງບໍ່ທັນແກ້ໄຂຕົກ. ເດັກນ້ອຍຢູ່ໃນເກນອາຍຸຮຽນບໍ່ໄດ້ເຂົ້າຮຽນ ຍັງມີຈຳນວນຫຼາຍ. ຍັງຂາດແຄນຄູ ແລະ ຫ້ອງຮຽນ.

**III. ທິດທາງລວມ ແລະ ບັນດາກິດຈະກຳທີ່ ຈະດຳເນີນໃຫ້ແກ່ການປະຕິບັດສາມແຜນງານໃຫຍ່ ໃນສະເພາະໜ້າ.**

**1. ທິດທາງລວມ**

1.1 ສືບຕໍ່ຂະຫຍາຍໂອກາດເຂົ້າຮຽນ ໃນທຸກຊັ້ນຮຽນໃຫ້ສອດຄ່ອງກັບແຜນພັດທະນາ ເສດຖະກິດສັງຄົມຂອງປະເທດ, ຫລຸດຜ່ອນຄວາມໂຕນກັນທາງດ້ານປະລິມານ ແລະ ຄຸນນະພາບ ລະຫວ່າງ ເຂດ, ແຂວງ, ເພດ ແລະ ເຜົ່າຊົນທາງດ້ານການສຶກສາເທື່ອລະກ້າວ.

1.2 ສືບຕໍ່ລຶບລ້າງຄວາມກືກໜັງສື ແລະ ບຳລຸງຍົກລະດັບການສຶກສາ ໃຫ້ແກ່ປະຊາຊົນ ໃນກຸ່ມເປົ້າໝາຍ, ໂດຍສະເພາະແມ່ນ ເຂດຈຸດສຸມຂອງ ການພັດທະນາເສດຖະກິດ, ເຂດຊົນເຜົ່າ ທີ່ປະຊາຊົນມີຄວາມທຸກຍາກ, ພິເສດແມ່ນເພດຍິງ ແລະ ຜູ້ດ້ອຍໂອກາດທາງການສຶກສາ. ສ້າງໂອກາດໃຫ້ແກ່ປະຊາຊົນ ໄດ້ມີການຮຽນຮູ້ຕະຫລອດຊີວິດ, ສ້າງເງື່ອນໄຂໃຫ້ຜູ້ຮຽນມີທາງເລືອກໃນການຮຽນຢ່າງກວ້າງຂວາງ.

1.3 ເອົາໃຈໃສ່ປັບປຸງຄຸນນະພາບ ການສຶກສາໃນທຸກຊັ້ນຮຽນ ແລະ ສາຍຮຽນ ( ຫລັກສູດປື້ມຕຳລາອຸປະກອນການສອນ, ຍົກລະດັບຄູ, ພັດທະນາແບບວິທີສອນ ທີ່ມີຄວາມຕິດພັນກັບຍຸກສະໄໝ ແຫ່ງຄວາມກ້າວໜ້າທາງດ້ານຂໍ້ມູນຂ່າວສານ ) ຄົ້ນຄ້ວານະໂຍບາຍທີ່ເປັນການສົ່ງເສີມເພດຍິງ ແລະ ຜູ້ດ້ອຍໂອກາດທາງການສຶກສາໄດ້ຕໍ່ໃນໂຮງຮຽນວິຊາຊີບ, ໂຮງຮຽນເຕັກນິກ ແລະ ສະຖາບັນການສຶກສາຊັ້ນສູງຢູ່ພາຍໃນ ແລະ ຕ່າງປະເທດ.

1.4 ສືບຕໍ່ພັດທະນາວຽກງານສ້າງຄູ ແລະ ຍົກລະດັບຄວາມສາມາດຂອງຄູອາຈານ ທີ່ສິດສອນຢູ່ໃນທຸກລະບົບໃຫ້ດີຂຶ້ນ. ພະຍາຍາມສູ້ຊົນປະຕິບັດນະໂຍບາຍຕໍ່ຄູຕາມມະຕິ ແລະ ຂໍ້ກຳນົດຕ່າງໆທີ່ມີຕໍ່ຄູ.

1.5 ສົ່ງເສີມ ແລະ ຂະຫຍາຍການສຶກສາເອກະຊົນ ລວມທັງສາຍສາມັນ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງອຳນວຍຄວາມສະດວກໃຫ້ແກ່ ຜູ້ທີ່ມີຄວາມປະສົງຢາກສ້າງໂຮງຮຽນດ້ວຍທືນ ແລະ ງົບປະມານສ່ວນຕົວຂອງຕົນ.

1.6 ສຶກສາອົບຮົມ ດ້ານຈາລິຍະທຳໃຫ້ແກ່ຄູ, ອາຈານ, ພະນັກງານ ແລະນັກຮຽນ-ນັກສຶກສາ ເພື່ອໃຫ້ເຂົາເຈົ້າເຂົ້າໃຈຕໍ່ແນວທາງນະໂຍບາຍຂອງ ລັດຖະບານ ໃນການພັດທະນາ ແລະ ສ້າງສາປະເທດຊາດ. ເຄົາລົບລະບຽບກົດໝາຍບ້ານເມືອງ, ສົ່ງເສີມຮີດຄອງປະເພນີ ແລະ ວັດທະນາທຳອັນເປັນມູນເຊື້ອຂອງຊາດ.

**2. ບັນດາກິດຈະກຳທີ່ຈະດຳເນີນ ເພື່ອສົ່ງເສີມແຕ່ລະແຜນງານ**

2.1 ກິດຈະກຳ ເພື່ອເປັນການສົ່ງເສີມ ໂຄງການຂະຫຍາຍໂອກາດການເຂົ້າຮຽນ, ປັບປຸງຂະຫຍາຍໂອກາດ ການເຂົ້າຮຽນໃນທຸກຊັ້ນຮຽນເປັນຕົ້ນແມ່ນ ເຂດຊຸມຊົນຫ່າງໄກສອກຫລີກ, ເລັ່ງໃສ່ຊັ້ນປະຖົມສຶກສາ ເພື່ອແນ່ໃສພົນລະເມືອງມີຄວາມຮູ້ພື້ນຖານ ໃນການປະກອບສ່ວນເຂົ້າໃນ ການພັດທະນາເສດຖະກິດ-ສັງຄົມ.

ສືບຕໍ່ປັບປຸງ ແລະ ຂະຫຍາຍອາຄານຫ້ອງຮຽນ ເພື່ອສະໜອງທຸກຊັ້ນຮຽນໃນເຂດຫ່າງໄກສອກຫລີກ ແລະ ເຂດຊຸມຊົນ ທີ່ປະຊາຊົນຍັງດຳລົງຊີວິດຢູ່ໃນເງື່ອນໄຂອຶດຢາກ, ທຸກຍາກ ສົ່ງເສີມໃຫ້ຊຸມຊົນມີສ່ວນຮ່ວມ ໃນການສ້າງໂຮງຮຽນ.

2.2 ດຳເນີນໂຄງການສຶກສາຂັ້ນພື້ນຖານເດັກຍິງໃຫ້ສຳເລັດ ໂຄງການດັ່ງກ່າວ ມີກຳນົດຈະປຸກສ້າງໂຮງຮຽນປະຖົມ ສຳລັບເຂດຫ່າງໄກສອກຫລີກຈຳນວນ 441 ຫລັງ, ໂຄງການໂຮງຮຽນປະຖົມ 700 ຫລັງ ໂດຍການຊ່ວຍເຫຼືອລ້າຈາກ ລັດຖະບານ ຍີ່ປຸ່ນ ໃຫ້ແກ່ລັດຖະບານ ລາວ ແລະ ໂຄງການພັດທະນາສຶກສາໄລຍະ II ແຕ່ນີ້ຮອດປີ 2008, ໂຄງການ SIDA, UNESCO, UNICEF ແລະ ໂຄງການຮ່ວມມືກັບອົງການທີ່ບໍ່ຂຶ້ນກັບລັດຖະບານ.

2.3 ຂະຫຍາຍໂຮງຮຽນປະຖົມໃຫ້ຄົບ 5 ຊັ້ນຮຽນໃນເຂດທີ່ມີນັກຮຽນພຽງພໍ. ດຳເນີນການສອນຫ້ອງຄວບ.

2.4 ສືບຕໍ່ສ້າງທຸກເງື່ອນໄຂ ເພື່ອໃຫ້ໂອກາດແກ່ເດັກຍິງຊົນເຜົ່າ ແລະ ກຸ່ມຄົນທີ່ດ້ອຍໂອກາດ ແລະ ເດັກພິການໃຫ້ໄດ້ເຂົ້າຮຽນ.

2.5 ປະຕິບັດນະໂຍບາຍເບັ່ງລັ່ງ ໃຫ້ນັກຮຽນຜູ້ທີ່ຖານະຄອບຄົວຍາກຈົນທີ່ຮຽນເກັ່ງ ເພື່ອສົ່ງເສີມໃຫ້ເຂົາເຈົ້າມີໂອກາດເຂົ້າຮຽນ.

2.6 ສືບຕໍ່ສອນໜັງສືໃຫ້ແກ່ຜູ້ໃຫຍ່ໃນກຸ່ມເປົ້າໝາຍ ອາຍຸ 15-40 ເພື່ອໃຫ້ເຂົາເຈົ້າອ່ານອອກຂຽນໄດ້ ແລະ ບຳລຸງຍົກລະດັບເຂົາເຈົ້າໃຫ້ສູງຂຶ້ນໃນທຸກລະດັບການສຶກສາ.

2.7 ອົບຮົມວິຊາຊີບການພື້ນຖານໃຫ້ແກ່ກຸ່ມປະຊາກອນ ທີ່ມີອາຍຸ 15-40 ປີ ຢ່າງກວ້າງຂວາງ ໂດຍວິທີການປັບປຸງສູນອົບຮົມວິຊາຊີບຢູ່ຂັ້ນທ້ອງຖິ່ນທີ່ມີແລ້ວນັ້ນ ໃຫ້ມີການເຄື່ອນໄຫວ.

2.8 ຈັດຕັ້ງປະຕິບັດແຜນການປຸກສ້າງໂຮງຮຽນເຕັກນິກ-ວິຊາຊີບຢູ່ແຂວງ ຄຳມ່ວນ, ອຸດົມໄຊ, ຊຽງຂວາງ ແລະ ບໍລິຄຳໄຊ ໃຫ້ສຳເລັດຕາມແຜນການທີ່ໄດ້ສຳຫຼວດໄວ້.

2.9 ສືບຕໍ່ຈັດຕັ້ງປະຕິບັດໂຄງການປຸກສ້າງມະຫາວິທະຍາໄລເຂດຢູ່ ແຂວງ ຈຳປາສັກ, ສະຫວັນນະເຂດ ແລະ ຫຼວງພະບາງ.

3. ກິດຈະການເພື່ອສົ່ງເສີມການປະຕິບັດແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ.

- ສືບຕໍ່ດຳເນີນການພັດທະນາຄູທີ່ສິດສອນແຕ່ລະຊັ້ນຮຽນດ້ານຄວາມຮູ້ ແລະ ຄວາມສາມາດຢ່າງຕໍ່ເນື່ອງ.
- ພັດທະນາຫຼັກສູດ, ປຶ້ມຕຳລາ ແລະ ການສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ ໃນທຸກຊັ້ນ ທຸກສາຍການສຶກສາ. ຈັດຕັ້ງການສອບເສັງໃຫ້ມີຄຸນນະພາບ, ຄວາມຮູ້ຂອງນັກຮຽນຕ້ອງມີຄຸນນະພາບສົມກັບຊັ້ນ ແລະ ລະບົບການຮຽນ.
- ສົ່ງເສີມນັກຮຽນເກັ່ງ ແລະ ມີພອນສະຫວັນພິເສດ. ເພີ່ມທະວີການກວດກາ, ການປະເມີນຜົນຂະບວນການສຶກສາຢ່າງມີລະບຽບຫຼັກການອັນແນ່ນອນ.
- ດຳເນີນການຈັດຕັ້ງປະຕິບັດ ໂຄງການສະກັດກັ້ນ ຢາເສບຕິດໃນໂຮງຮຽນ ແລະ ສະຖາບັນການສຶກສາດ້ວຍຫຼາຍຮູບການ.
- ກິດຈັດກຳສົ່ງເສີມການປະຕິບັດແຜນງານບໍລິຫານ ແລະ ຄຸ້ມຄອງ ເພີ່ມທະວີວຽກງານການສຶກສາອົບຮົມຈາລິຍະທຳໃຫ້ແກ່ພະນັກງານ, ຄູ-ອາຈານ ແລະ ນັກຮຽນ-ນັກສຶກສາ ດ້ວຍຫຼາຍຮູບການປັບປຸງການຈັດຕັ້ງ ແລະ ກຳນົດພາລະບົດບາດໃຫ້ແກ່ຂັ້ນຄຸ້ມຄອງ ແຕ່ລະຂັ້ນໃຫ້ຈະແຈ້ງ ມີແບບແຜນວິທີເຮັດວຽກ ທີ່ເໝາະສົມ ແລະ ສອດຄ່ອງ ທີ່ເກີດປະໂຫຍດແກ່ຜົນສຳເລັດມີຄຸນນະພາບ.

- ຈັດຕຳແໜ່ງງານ ໃຫ້ແກ່ພະນັກງານວິຊາການແຕ່ລະຂັ້ນ ໃຫ້ສອດຄ່ອງກັບຄວາມຮູ້ຄວາມສາມາດ ແລະ ມີລະບົບການກວດກາ ປະເມີນຜົນຄວາມຮັບຜິດຊອບຂອງພະນັກງານໃນການປະຕິບັດໜ້າທີ່ ຢ່າງມີວິທະຍາສາດ.

1) **ສະຫລຸບ:**

ເຖິງແມ່ນ ກະຊວງສຶກສາໄດ້ໃຊ້ຄວາມພະຍາຍາມຂອງຕົນໃນຫຼາຍຮູບ ແລະ ວິທີການ ເພື່ອພັດທະນາການສຶກສາ ໃຫ້ມີການຫັນປ່ຽນ ເພື່ອກ້າວໄປສູ່ຄຸນນະພາບໃໝ່, ໃນຊ່ວງເວລາຜ່ານມາ ແລະ ກຳນົດທິດທາງປັບປຸງແກ້ໄຂໃນຕໍ່ໜ້າກໍ່ຕາມ, ແຕ່ສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກທີ່ຂະແໜງການສຶກສາຈະປະເຊີນໃນຕໍ່ໜ້ານັ້ນ ກໍຍັງມີຫຼາຍຢູ່ຄື:

- ຈຸດພິເສດຂອງ ລາວ ທີ່ເປັນ ປະເທດ ດ້ອຍພັດທະນານັ້ນ ມັນໄດ້ສົ່ງຜົນກະທົບເຖິງ ຂະບວນການພັດທະນາການສຶກສາ ຢ່າງຫຼີກເວັ້ນບໍ່ໄດ້ ກ່ອນອື່ນໝົດ ມັນຈະສະແດງອອກໃຫ້ເຫັນຄຸນນະພາບການສຶກສາຂອງລາວ ຍັງຕ່ຳກວ່າສາກົນຫຼາຍ.
- ບັນຫາຄູ ຄວາມຮູ້, ຄວາມສາມາດຍັງຕ່ຳ ແລະ ຄວາມຮັກອາຊີບຄູຂອງສັງຄົມທົ່ວໄປຍັງບໍ່ທັນສົ່ງຜົນສະທ້ອນເຖິງຜູ້ຍຶດອາຊີບຄູ.
- ວັດຖຸອຸປະກອນ, ປຶ້ມແບບຮຽນ ຮັບໃຊ້ການຮຽນ-ການສອນ ຍັງຂາດເຂີນທີ່ສຸດ.
- ການບໍລິຫານຄຸ້ມຄອງບໍ່ທັນດີ-ເງື່ອນໄຂການລົງທຶນຂອງລັດຕໍ່ວຽກງານການສຶກສາຍັງຈຳກັດ.

ສະນັ້ນ ຈຶ່ງສະຫຼຸບໄດ້ວ່າ ເພື່ອພັດທະນາຊັບພະຍາກອນມະນຸດ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງແນວທາງພັດທະນາເສດຖະກິດ-ສັງຄົມ ຂະແໜງການສຶກສາຍັງຈະໄດ້ບືນຕົວຫຼາຍ. ແຕ່ຂະແໜງການສຶກສາ ເຊື່ອໝັ້ນວ່າ ໂດຍການຕັດສິນໃຈຂອງລັດຖະບານ ບວກກັບການປະກອບສ່ວນຂອງພົນລະເມືອງລາວໝົດທັງຊາດ ທີ່ຍຶດໝັ້ນໃນກົດໝາຍລັດຖະທຳມະນູນທີ່ວ່າ: " ການພັດທະນາການສຶກສາ ແມ່ນພາລະກິດຂອງມະຫາຊົນ ", ການປະກອບສ່ວນຊ່ວຍເຫຼືອຮ່ວມມື ຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ. ກະຊວງສຶກສາທິການຈະຕ້ອງມີຜົນສຳເລັດໃນການພັດທະນາການສຶກສາ ໃຫ້ມີບາດກ້າວດີຂຶ້ນຢ່າງແນ່ນອນ.